# ກະຊວງອຸດສາຫະກຳ ແລະ ການຄ້າ

## ສະຖາບັນຄົ້ນຄວ້າເສດຖະກິດອຸດສາຫະກຳ ແລະ ການຄ້າ

# ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

### ສຶກສາຜົນກະທົບຂອງພະຍາດໂຄວິດ 19 (COVID-19) ທີ່ມີຕໍ່ອຸດສາຫະກຳການຜະລິດໃນເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ










**ມິຖຸນາ 2020**

### ພາກສະຫຼຸບຫຍໍ້

ຈາກສະພາບການລະບາດຂອງພະຍາດໂຄວິດ 19 ໄດ້ເຮັດໃຫ້ເກີດຜົນກະທົບຕໍ່ທັງເສດຖະກິດ - ສັງຄົມ, ຜົນກະທົບຕໍ່ການຜະລິດ - ທຸລະກິດຂອງປະເທດ ໂດຍສະເພາະແມ່ນການສະໜອງຄວາມຕ້ອງການຂອງປະຊາຊົນບັນດາເຜົ່າທີ່ມີຕໍ່ສິນຄ້າອຸປະໂພກບໍລິໂພກ ຕະຫຼອດເຖິງການຜະລິດ ແລະ ການສົ່ງອອກຂອງໂຮງງານອຸດສາຫະກຳທີ່ດຳເນີນການຜະລິດທັງພາຍໃນ ແລະ ພາຍນອກເຂດນິຄົມອຸດສາຫະກຳ ແລະ ການຄ້າ; ເນື່ອງຈາກ ການສະໜອງສິນຄ້າ ແລະ ບໍລິການຫລາຍຊະນິດຖືກກະທົບຍ້ອນການຈຳກັດການຂົນສົ່ງ, ລະບົບໂລຈິສຕິກ ແລະ ການຄ້າລະຫວ່າງປະເທດ ປະກອບກັບການຖືກຈຳກັດ, ໂຈະການດຳເນີນທຸລະກິດ ຫຼື ການສັ່ງຊື້ຈາກປະເທດຜູ້ນຳເຂົ້າທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19 ຈຶ່ງເຮັດໃຫ້ຕ່ອງໂສ້ການສະໜອງເຄື່ອນໄຫວບໍ່ໄດ້. ຜົນຂອງການສຶກສາ ພົບວ່າ ອຸດສາຫະກຳໃນເຂດນິຄົມສ່ວນໃຫຍ່ເຫັນວ່າມີຜົນກະທົບຮຸນແຮງຫຼາຍ ໂດຍຄວາມສ່ຽງຕໍ່ການຢຸດເຊົາຂອງອຸດສາຫະກຳແມ່ນມີການຢຸດການຜະລິດຊົ່ວຄາວ 1 ເດືອນ ແລະ ຄວາມສ່ຽງທີ່ໄດ້ຮັບຫຼາຍກວ່າໝູ່ແມ່ນ ຄວາມຕ້ອງການຂອງສິນຄ້າ ແລະ ບໍລິການຫຼຸດລົງ, ແລະ ບໍ່ສາມາດຜະລິດສິນຄ້າໄດ້ຕາມສັນຍາທີ່ມີການຕົກລົງໄວ້. ສຳລັບຜົນກະທົບຕໍ່ລາຍຮັບຂອງອຸດສາຫະກຳແມ່ນ ຫຼຸດລົງ 33.5%-47.7%; ພາຍໃຕ້ສະພາບການໃນປັດຈຸບັນ ອຸດສາຫະກຳສ່ວນໃຫຍ່ແມ່ນໄດ້ມີການປັບຕົວໂດຍຊອກຕະຫຼາດໃໝ່, ແລະ ອຸດສາຫະກຳໄດ້ປະສົບບັນຫາທີ່ສຳຄັນກວ່າໝູ່ໃນການດຳເນີນທຸລະກິດແມ່ນ ການນຳເຂົ້າ ແລະ ສະໜອງວັດຖຸດິບ. ນອກນີ້, ທາງອຸດສາຫະກຳຍັງສະເໜີໃຫ້ພາກລັດຊ່ວຍນະໂຍບາຍທາງດ້ານອາກອນທີ່ເປັນນະໂຍບາຍສະເພາະໃນເຂດນິຄົມຫຼາຍກວ່າໝູ່ ໂດຍເນັ້ນໃຫ້ມີການຫຼຸດອາກອນລາຍໄດ້ຫຼັງໄລຍະຍົກເວັ້ນຄ່າອາກອນຂອງນິຄົມ ແລະ ການເລື່ອນໄລຍະເວລາການຍົກເວັ້ນຄ່າອາກອນອອກໄປຕື່ມ.

# ສຶກສາຜົນກະທົບຂອງພະຍາດໂຄວິດ 19 (COVID-19) ທີ່ມີຕໍ່ອຸດສາຫະກໍາການ ຜະລິດໃນເຂດນິຄົມອຸດສາຫະກໍາ ແລະ ການຄ້າ ວຽງຈັນ-ໂນນທອງ (VITA)*

## ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

**ໂດຍ: ປອ. ນ. ທານຕາວັນ ມະໂນລົມ****

**ພະແນກຄົ້ນຄວ້ານະໂຍບາຍອຸດສາຫະກໍາ ແລະ ຫັດຖະກໍາ.**

**ສະຖາບັນຄົ້ນຄວ້າເສດຖະກິດອຸດສາຫະກໍາ ແລະ ການຄ້າ (ສສອຄ).**

## I. ຈຸດປະສົງຂອງການສຶກສາ[1].

ເວລານີ້ ຄົງຈະບໍ່ມີປະເດັນໃດທີ່ໜ້າສົນໃຈໄດ້ຫຼາຍເທົ່າ ການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ອົງການອານາໄມໂລກ ຍົກລະດັບໃຫ້ເປັນພາວະການລະບາດໃຫຍ່ທົ່ວໂລກ (Pandemic). ການລະບາດຂອງພະຍາດໂຄວິດ 19 ສົ່ງຜົນ ກະທົບເປັນວົງກວ້າງຕໍ່ເສດຖະກິດທົ່ວໂລກ ເຊິ່ງສົ່ງຜົນກະທົບ ໃຫ້ຜູ້ປະກອບການທຸກທຸລະກິດທີ່ຕ້ອງປັບແຜນການດໍາເນີນ ການໃໝ່ ເພື່ອໃຫ້ສອດຄ່ອງກັບສະຖານະການຂອງການແຜ່ ລະບາດ. ນັກເສດຖະສາດທົ່ວໂລກອອກມາວິເຄາະເຖິງຜົນ ກະທົບຕໍ່ເສດຖະກິດໂລກ ໂດຍພົບວ່າມີຜົນກະທົບຜ່ານຫ່ວງ ໂສ້ອຸປະທານໂລກ (Supply chain) ຈາກບັນຫາການຂາດ ແຄນແຮງງານ ແລະ ວັດຖຸດິບ. ໃນພາກອຸດສາຫະກໍາການ ຜະລິດເອງກໍ່ປະສົບບັນຫາການຢຸດເຊົາການຜະລິດຊົ່ວຄາວ ໂດຍສະເພາະພາກອຸດສາຫະກໍາທີ່ຈະຕ້ອງເພິ່ງພາການນໍາເຂົ້າ ຈາກປະເທດຈີນ ທີ່ໄດ້ຂຶ້ນຊື່ວ່າເປັນໂຮງງານຜະລິດຂອງໂລກ (The World's Factory) ເຊິ່ງເມື່ອພາກອຸດສາຫະກໍາໃນ ປະເທດຈີນຈໍາເປັນຕ້ອງຢຸດເຊົາການຜະລິດໃນໂຮງງານແລ້ວ ກໍ່ ຈະກະທົບກັບຍອດການຜະລິດ ແລະ ການສົ່ງອອກຈາກພາກ ອຸດສາຫະກໍາທົ່ວໂລກ ໂດຍສະເພາະໃນປະເທດທີ່ກໍາລັງ ພັດທະນາທີ່ລະບົບເສດຖະກິດຈໍາເປັນຕ້ອງເພິ່ງພາການຄ້າ ລະຫວ່າງປະເທດເປັນຫຼັກ.

ນັບແຕ່ທ້າຍປີ 2019 ຈົນເຖິງປັດຈຸບັນ ເຖິງວ່າການ ແຜ່ລະບາດຂອງພະຍາດໂຄວິດ 19 ໃນ ສປປ ລາວ ຈະສາມາດ ຄວບຄຸມໄດ້ ໂດຍການວາງມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດທີ່ຮັດກຸມ ຂອງລັດຖະບານ ແຕ່ການແຜ່ລະບາດຂອງເຊື້ອໄວຣັດດັ່ງກ່າວ ໃນຫຼາຍປະເທດທົ່ວໂລກຍັງສືບຕໍ່ເພີ່ມຂຶ້ນ ແລະ ໃນປັດຈຸບັນ ສາມປະເທດຄູ່ຄ້າລາຍໃຫຍ່ (ໄທ, ຈີນ ແລະ ຫວຽດນາມ) ຂອງ ສປປ ລາວ ກໍຍັງບໍ່ທັນເປີດເສລີໃນການເດີນທາງເຂົ້າ-ອອກ ປະເທດເທື່ອ; ປັດໄຈທັງໝົດທີ່ຍົກຂຶ້ນນັ້ນໄດ້ສົ່ງຜົນກະທົບໂດຍ ກົງຕໍ່ການດໍາເນີນທຸລະກິດໃນຂະແໜງການຕ່າງໆ ຂອງປະເທດ ຢ່າງຫຼີກລ້ຽງບໍ່ໄດ້. ຕໍ່ກັບສະພາບການດັ່ງກ່າວບົດສຶກສາໂດຍຫຍໍ້ ນີ້ ຈະໄດ້ຍົກເອົານິຄົມອຸດສາຫະກໍາ ແລະ ການຄ້າ ວຽງຈັນ-ໂນນທອງເປັນເຂດຈຸດສຸມຕົວຢ່າງໃນການສຶກສາ ເພື່ອຊີ້ໃຫ້ເຫັນ ເຖິງຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ ມີຕໍ່ອຸດສາຫະກໍາການຜະລິດເພື່ອການສົ່ງອອກໃນເຂດນິຄົມອຸດ ສາຫະກໍາ ແລະ ການຄ້າ ວຽງຈັນ-ໂນນທອງ ແລະ ສະເໜີແນະ ວິທີການແກ້ໄຂ. ນອກຈາກນັ້ນ ການສຶກສາຄັ້ງນີ້ຍັງມີເປົ້າໝາຍ ເພື່ອໃຫ້ກາຍເປັນຂໍ້ມູນທາງດ້ານວິຊາການຕໍ່ບັນດາຂະແໜງການ ຄຸ້ມຄອງມະຫາພາກໃນການວາງນະໂຍບາຍ, ສ້າງແຜນການ ແລະ ອອກມາດຕະການຕ່າງໆ ທີ່ຕິດພັນກັບເຂດນິຄົມອຸດ ສາຫະກໍາ ແລະ ການຄ້າ ວຽງຈັນ-ໂນນທອງ ໃນອະນາຄົດ. ຜົນ ຂອງການສຶກສາສາມາດສະຫຼຸບໄດ້ດັ່ງລຸ່ມນີ້:

---

[1] * - ຂໍຂອບໃຈການສະໜອງຂໍ້ມູນຂອງສະພາບໍລິຫານເສດຖະກິດນິຄົມ ອຸດສາຫະກໍາ ແລະ ການຄ້າ ວຽງຈັນ-ໂນນທອງ (VITA).

- ຂໍຂອບໃຈທີມງານເກັບກໍາຂໍ້ມູນຂອງພະແນກຄົ້ນຄວ້ານະໂຍບາຍອຸດ ສາຫະກໍາ ແລະ ຫັດຖະກໍາ, ສະຖາບັນຄົ້ນຄວ້າເສດຖະກິດອຸດສາຫະກໍາ ແລະ ການຄ້າ (ສສອຄ).

**thantavanhtp@gmail.com; thantavanh@hotmail.com

***ສະພາບການຜະລິດລວມຂອງເຂດ.***

ນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ (VITA)[2] ກໍ່ຕັ້ງເມື່ອປີ 2009 ມີນະໂຍບາຍສົ່ງເສີມການລົງທຶນເຂົ້າໃນເຂດນິຄົມ ກ່ຽວກັບ ກິດຈະກຳອຸດສາຫະກຳ (ຕ່ຳແຜ່ນ, ເກີບ, ເຄື່ອງນຸ່ງຫົ່ມ, ລົດປະເພດຕ່າງໆ, ເຄື່ອງໃຊ້ໄຟຟ້າ, ເຄື່ອງເອເລັກໂຕຣນິກ, ເຄື່ອງກົນຈັກ); ກິດຈະກຳການຄ້າ (ຮ້ານຂາຍຍ່ອຍ, ສູນການຄ້າ ແລະ ອາຄານຕ່າງໆ ເພື່ອບໍລິການດ້ານການຄ້າ; ແລະ ກິດຈະກຳການບໍລິການ (ສູນຝຶກອົບຮົມ, ໂຮງຮຽນ, ໂຮງໝໍ, ໂຮງແຮມ ແລະ ກິດຈະການປຸກສ້າງອື່ນໆ). ປັດຈຸບັນ ພາຍໃນນິຄົມມີຜູ້ລົງທຶນທັງໝົດ 66 ບໍລິສັດ ໃນນັ້ນອຸດສາຫະກຳທີ່ມີການຜະລິດຕົວຈິງ ແລະ ສົ່ງອອກທັງໝົດ 28 ບໍລິສັດ, ສາມາດສ້າງວຽກເຮັດງານທຳໄດ້ 3.052 ຄົນ (ຄົນຕ່າງປະເທດ 79 ຄົນ)[3].

ພະຍາດໂຄວິດ 19 ໄດ້ເຮັດໃຫ້ເກີດຜົນກະທົບຕໍ່ການສະໜອງສິນຄ້າອຸປະໂພກບໍລິໂພກ ຕະຫຼອດເຖິງວັດຖຸດິບຮັບໃຊ້ການຜະລິດ ແລະ ການສົ່ງອອກຂອງໂຮງງານອຸດສາຫະກຳທັງພາຍໃນ ແລະ ພາຍນອກເຂດນິຄົມອຸດສາຫະກຳ ແລະ ການຄ້າ; ເນື່ອງຈາກການຂົນສົ່ງ, ລະບົບໂລຈິສຕິກ ແລະ ການຄ້າຖືກຈຳກັດ ຫຼື ໂຈະການດຳເນີນທຸລະກິດຢູ່ຫຼາຍປະເທດຈຶ່ງເຮັດໃຫ້ຕ່ອງໂສ້ການສະໜອງເຄື່ອນໄຫວບໍ່ໄດ້. ພ້ອມນີ້ ສິ່ງທີ່ຕ້ອງໄດ້ເອົາໃຈໃສ່ຫຼາຍຂຶ້ນຈາກສະພາບໃນປັດຈຸບັນຂອງອຸດສາຫະກຳການຜະລິດແມ່ນ ຄວາມສ່ຽງທີ່ເກີດຈາກການປ່ຽນແປງພຶດຕິກຳຂອງຜູ້ບໍລິໂພກທີ່ຍັງຕ້ອງໃຊ້ເວລາໃນການປັບຕົວ ແລະ ບໍ່ແນ່ວ່າກຳລັງຊື້ ແລະ ຄວາມຕ້ອງການຈະຍັງຄືເກົ່າ ເໝືອນດັ່ງຕອນທີ່ຍັງບໍ່ທັນມີການລະບາດຂອງພະຍາດໂຄວິດ 19 ເພາະກົດລະບຽບຕ່າງໆ ມີການປ່ຽນແປງໄປຕາມສະພາບຂອງການລະບາດ.

## II. ການວິເຄາະຂໍ້ມູນທີ່ເກັບກຳພາກສະໜາມ.

### 2.1 ການເກັບກຳຂໍ້ມູນ.

ການສຶກສາຄັ້ງນີ້ ໄດ້ມີການເກັບກຳຂໍ້ມູນໂດຍການສຳພາດ (In-depth Interviews)[4] ຜູ້ຕາງໜ້າສະພາບໍລິຫານເສດຖະກິດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ, ຜູ້ຕາງໜ້າໂຮງງານອຸດສາຫະກຳ ຄຽງຄູ່ກັບການລົງພື້ນທີ່ ແລະ ນຳໃຊ້ແບບສຳຫຼວດເກັບກຳຂໍ້ມູນກັບອຸດສາຫະກຳການຜະລິດໃນເຂດນິຄົມ ເຊິ່ງຄິດເປັນ 86% ຂອງຈຳນວນໂຮງງານອຸດສາຫະກຳທັງໝົດທີ່ຜະລິດຕົວຈິງ ແລະ ສົ່ງອອກໃນເຂດ VITA ທີ່ຍັງສືບຕໍ່ການດຳເນີນການຜະລິດພາຍຫລັງມີການລະບາດຂອງພະຍາດໂຄວິດ 19 ແລະ ພາຍຫຼັງມາດຕະການຜ່ອນຜັນຂອງລັດຖະບານໃນການອະນຸຍາດໃຫ້ກັບມາເປີດດຳເນີນກິດຈະການຄືນ[5]. ໃນຄວາມເປັນຈິງແລ້ວ ເຖິງແມ່ນວ່າຈະເລີ່ມມີການອະນຸຍາດໃຫ້ເປີດກິດຈະການຄືນໂດຍປະຕິບັດຕາມຄຳແນະນຳຂອງພາກລັດຖະບານ[6] ແຕ່ໃນທາງປະຕິບັດແມ່ນຍັງຕ້ອງໃຊ້ເວລາໃນການປັບຕົວຫຼາຍສົມຄວນຈຶ່ງເຮັດໃຫ້ມີຫຼາຍໂຮງງານຍັງບໍ່ທັນສາມາດເປີດກິດຈະການຄືນໄດ້ໃນຊ່ວງເວລາທີ່ທີມງານຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນ; ດັ່ງນັ້ນ ມີພຽງ 24

---

[2] VITA ມີອາຍຸສັນຍາສຳປະທານ 75 ປີ, ຕັ້ງຢູ່ເມືອງໄຊທານີ ນະຄອນຫຼວງວຽງຈັນ. ນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ເປັນເຂດທີ່ຕັ້ງຫ່າງຈາກໃຈກາງນະຄອນຫຼວງວຽງຈັນ 22 ກິໂລແມັດ, ເປັນນິຄົມທີ່ມີລັດຖະບານ ສປປ ລາວ ຮ່ວມກັບເອກະຊົນ ສປ ຈີນ (ໄຕ້ຫວັນ) ເປັນຜູ້ພັດທະນາ ໂດຍມີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຕາງໜ້າໃນສະພາບໍລິຫານເສດຖະກິດຂອງນິຄົມ

[3] ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳປີ 2019 ແລະ ທິດທາງແຜນການປະຈຳປີ 2020.

[4] ໄດ້ມີການສຳພາດຜ່ານລະບົບອອນລາຍ ແລະ ລະບົບໂທລະສັບໃນກໍລະນີທີ່ຜູ້ໃຫ້ສຳພາດ ຫຼື ຜູ້ຕອບແບບສຳຫຼວດບໍ່ສະດວກໃຫ້ພົບ ແຕ່ສະດວກໃຫ້ຂໍ້ມູນຜ່ານລະບົບອອນລາຍ ແລະ ລະບົບໂທລະສັບ.

[5] ອຸດສາຫະກຳທີ່ປະກອບສ່ວນໃຫ້ຂໍ້ມູນປະກອບມີ ອ/ກ ພັດທະນານິຄົມ; ອ/ກ ເຄື່ອງຫຼິ້ນຕຸກກະຕາ; ອ/ກ ນ້ຳດື່ມ ແລະ ເຄື່ອງປຸງລົດອາຫານ; ອ/ກ ເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ; ອ/ກ ຜະລິດຄົມຕັດ; ອ/ກ ເຄື່ອງມື, ອາໄຫຼ່, ເຄື່ອງຈັກ ແລະ ເຄື່ອງກົນຈັກກະສິກຳ; ອ/ກ ຜະລິດໝາກລໍ້ ແລະ ລໍ້ຍູ້; ອ/ກ ລົດຍົນ, ລົດຈັກ, ພາຫະນະ ແລະ ອາໄຫຼ່; ອ/ກ ບໍລິສັດກໍ່ສ້າງ ແລະ ອຸປະກອນກໍ່ສ້າງ; ແລະ ອ/ກ ປຸງແຕ່ງຜະລິດຕະພັນກະສິກຳ.

[6] ຄຳແນະນຳ ກ່ຽວກັບການປັບປ່ຽນເງື່ອນໄຂ ແລະ ມາດຕະການສຳລັບການເຄື່ອນໄຫວຂອງພາກທຸລະກິດໃນໄລຍະທີ່ມີການລະບາດພະຍາດໂຄວິດ 19 ຕາມທີ່ໄດ້ກຳນົດໃນຄຳແນະນຳ 031/ສພກ, ລົງວັນທີ 21 ເມສາ 2020 ແລະ ປ່ຽນແທນສະບັບເລກທີ 071/ສພກ, ລົງວັນທີ 11 ພຶດສະພາ 2020.

ຫົວໜ່ວຍອຸດສາຫະກໍາການຜະລິດທີ່ໄດ້ຕອບແບບສໍາຫຼວດ ແລະ ໃຫ້ຂໍ້ມູນໂດຍການສໍາພາດ (ຜ່ານລະບົບອອນລາຍ ແລະ ລະບົບໂທລະສັບ) ໃນ 10 ກຸ່ມປະເພດ[7] (ຮູບສະແດງທີ 01).

**ຮູບສະແດງທີ 01:** ປະເພດທຸລະກິດຂອງໂຮງງານອຸດສາຫະກໍາທີ່ຕອບແບບສໍາຫຼວດໃນເຂດນິຄົມ VITA.




## 2.2 ຜົນກະທົບຂອງ ໂຄວິດ 19 ທີ່ມີຕໍ່ອຸດສາຫະກໍາໃນເຂດນິຄົມ VITA.

***ການປະເມີນຜົນກະທົບຂອງ ໂຄວິດ 19 ຕໍ່ອຸດສາຫະກໍາໃນເຂດນິຄົມ.***

ສໍາລັບການປະເມີນຕົນເອງຂອງໂຮງງານອຸດສາຫະກໍາຕໍ່ຜົນກະທົບຂອງພະຍາດໂຄວິດ 19 ພົບວ່າ ໂຮງງານອຸດສາຫະກໍາຈໍານວນເຄິ່ງໜຶ່ງ ຫຼື 50% ຂອງຜູ້ທີ່ຕອບແບບສໍາຫຼວດ ເຫັນວ່າ ມີຜົນກະທົບຮຸນແຮງຫຼາຍ ຍ້ອນວ່າມີການປິດໂຮງງານຊົ່ວຄາວ ປະກອບກັບມີຫຼາຍໂຮງງານທີ່ແຮງງານສ່ວນໃຫຍ່ບໍ່ໄດ້ພັກຢູ່ໃນໂຮງງານ ຈຶ່ງເຮັດໃຫ້ມີຂໍ້ຈໍາກັດຈາກການປະຕິບັດຕາມນະໂຍບາຍຂອງລັດຖະບານໃນການສະກັດກັ້ນການແຜ່ລະບາດຂອງພະຍາດ; ຮອງລົງມາແມ່ນ 30% ທີ່ຕອບວ່າມີຜົນກະທົບຮຸນແຮງປານກາງ, 10% ທີ່ຕອບວ່າຮຸນແຮງທີ່ສຸດ ແລະ ອີກ 10% ຕອບວ່າກະທົບບາງສ່ວນ (ຮູບສະແດງ 02).

[7] ໄລຍະເວລາຂອງການລົງເກັບກໍາຂໍ້ມູນຂອງທີມງານໃນເຂດນິຄົມ VITA ແມ່ນ ລະຫວ່າງ ວັນທີ 20/05/2020-10/06/2020.

**ຮູບສະແດງ 02:** ຜົນກະທົບຂອງພະຍາດໂຄວິດ 19 ຕໍ່ໂຮງງານອຸດສາຫະກໍາໃນເຂດນິຄົມ VITA.




ນອກນີ້, ອີງໃສ່ສະຖານະການແຜ່ລະບາດໃນປັດຈຸບັນແມ່ນມີ 70% ຂອງໂຮງງານອຸດສາຫະກໍາທີ່ຕອບແບບສໍາຫຼວດເຫັນວ່າ ຄວາມສ່ຽງຕໍ່ການຢຸດເຊົາການຜະລິດຊົ່ວຄາວ 1 ເດືອນແມ່ນຫຼາຍກວ່າໝູ່; ຮອງລົງມາແມ່ນຢຸດການຜະລິດຊົ່ວຄາວ 3 ເດືອນຂຶ້ນໄປ ມີ 20% ແລະ ຢຸດການຜະລິດຊົ່ວຄາວ 2 ເດືອນ ມີ 10% ແຕ່ບໍ່ມີໂຮງງານໃດທີ່ປິດຕົວຖາວອນ (ຮູບສະແດງ 03).

**ຮູບສະແດງ 03:** ຄວາມສ່ຽງຕໍ່ການຢຸດເຊົາຂອງໂຮງງານ.




ເມື່ອສອບຖາມເຖິງຄວາມສ່ຽງທີ່ໂຮງງານອຸດສາຫະກໍາໄດ້ຮັບຫຼາຍກວ່າໝູ່ຈາກການກະທົບຂອງພະຍາດໂຄວິດ 19 ເຫັນວ່າ 40% ແມ່ນການສັ່ງຊື້ສິນຄ້າ ແລະ ບໍລິການຫຼຸດລົງເນື່ອງຈາກແຕ່ລະປະເທດລ້ວນແຕ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ ຈຶ່ງເຮັດໃຫ້ການສັ່ງຊື້ມີປະລິມານທີ່ຫຼຸດລົງ; ແລະ 40% ບໍ່ສາມາດຜະລິດສິນຄ້າໄດ້ຕາມສັນຍາທີ່ມີການຕົກລົງໄວ້ ເພາະຕ້ອງປະຕິບັດຕາມນະໂຍບາຍປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງ

ພະຍາດ ຈຶ່ງເຮັດໃຫ້ຕ້ອງປິດໂຮງງານຊົ່ວຄາວ; ຮອງລົງມາ 10% ແມ່ນບໍ່ສາມາດຈ່າຍເງິນເດືອນພະນັກງານ, 5% ບໍ່ສາມາດຈ່າຍຕົ້ນທຶນ ແລະ ດອກເບ້ຍເງິນກູ້, ແລະ ອີກ 5% ແມ່ນຄວາມສ່ຽງອື່ນໆ (ຮູບສະແດງ 04)

**ຮູບສະແດງ 04:** ຄໍາເຫັນກ່ຽວກັບຄວາມສ່ຽງຂອງການແຜ່ລະບາດຕໍ່ໂຮງງານອຸດສາຫະກໍາ.




ສໍາລັບຜົນກະທົບຕໍ່ລາຍຮັບຂອງອຸດສາຫະກໍາໃນໄລຍະຂອງການແຜ່ລະບາດຂອງພະຍາດໂຄວິດ 19 ແມ່ນພົບວ່າ ໂຮງງານອຸດສາຫະກໍາສ່ວນໃຫຍ່ເຫັນວ່າລາຍຮັບໃນໄຕມາດ 1 ແລະ ໄຕມາດ 2 ຂອງປີ 2020 ແມ່ນຫຼຸດລົງ ໂດຍອັດຕາສະເລ່ຍເມື່ອປຽບທຽບກັບປີ 2019 ໃນໄລຍະດຽວກັນແມ່ນ ໄຕມາດ 1 ຫຼຸດລົງ 33.5% ແລະ ໄຕມາດ 2 ຫຼຸດລົງ 47.70% (ຮູບສະແດງ 05).

**ຮູບສະແດງ 05:** ຜົນກະທົບຕໍ່ລາຍຮັບຂອງອຸດສາຫະກໍາ.




| | ໄຕມາດ 1 | ໄຕມາດ 2 |
|---|---|---|
| ຫຼຸດລົງ | 33.50% | 47.70% |

### *ການປັບຕົວ ແລະ ແນວທາງນະໂຍບາຍການແກ້ໄຂຂອງອຸດສາຫະກໍາໃນເຂດນິຄົມຕໍ່ການແຜ່ລະບາດຂອງພະຍາດໂຄວິດ 19.*

ພາຍໃຕ້ສະພາບການໃນປັດຈຸບັນ ໂຮງງານອຸດສາຫະກໍາ 40% ຂອງໂຮງງານທີ່ໄດ້ເກັບກໍາຂໍ້ມູນນໍາແມ່ນໄດ້ມີການປັບຕົວໂດຍການຊອກຫາຕະຫຼາດໃໝ່; ຮອງລົງມາ 20% ແມ່ນປັບຕົວໂດຍການພະຍາຍາມຮັກສາຕະຫຼາດເກົ່າໄວ້; ນອກນີ້ 10% ແມ່ນປັບຕົວໂດຍການປັບປຸງຜະລິດຕະພັນໃໝ່, ແລະ 10% ແມ່ນຫຼຸດຈໍານວນການຜະລິດລົງ (ຮູບສະແດງ 06). ແຕ່ເຖິງຢ່າງໃດກໍຕາມ ພາຍໃຕ້ສະພາບການໃນປັດຈຸບັນ ບັນຫາທີ່ສໍາຄັນກວ່າໝູ່ໃນການດໍາເນີນທຸລະກິດຂອງໂຮງງານອຸດສາຫະກໍາໃນເຂດນິຄົມແມ່ນ ບັນຫາຂອງການນໍາເຂົ້າ ແລະ ສະໜອງວັດຖຸດິບ ທີ່ມີຜູ້ຕອບແບບສໍາຫຼວດສູງເຖິງ 22.60%; ຮອງລົງມາແມ່ນ ຍອດຂາຍຫຼຸດລົງມີ 19%, ຂາດແຄນແຮງງານໃນການດໍາເນີນການຜະລິດ ແລະ ຜະລິດຕາມຄໍາສັ່ງຊື້ກ່ອນເກີດການລະບາດຂອງພະຍາດບໍ່ທັນແມ່ນມີອັດຕາສ່ວນເທົ່າກັນ ຄື: 12.90%; ພ້ອມນີ້ ຍັງເຫັນວ່າການສັ່ງຍົກເລີກສັ່ງຊື້ສິນຄ້າຂອງຄູ່ຄ້າແມ່ນບໍ່ໄດ້ເປັນບັນຫາອຸປະສັກຕໍ່ການດໍາເນີນທຸລະກິດຂອງໂຮງງານ (ຮູບສະແດງ 07).

**ຮູບສະແດງ 06:** ການປັບຕົວຂອງອຸດສາຫະກໍາໃນເຂດນິຄົມ.



**ຮູບສະແດງ 07:** ບັນຫາທີ່ອຸດສາຫະກຳປະສົບໃນການດຳເນີນທຸລະກິດ.




***ມາດຕະການແກ້ໄຂຂອງໂຮງງານອຸດສາຫະກຳເພື່ອຮັບມືກັບສະພາບທີ່ເກີດຂຶ້ນໃນໄລຍະຜ່ານມາ.***

ສຳລັບມາດຕະການໃນການແກ້ໄຂຂອງໂຮງງານອຸດສາຫະກຳຕໍ່ຜົນກະທົບຂອງພະຍາດໂຄວິດ 19 ແມ່ນເຫັນວ່າ ມີການດຳເນີນຫຼາຍມາດຕະການຄຽງຄູ່ກັນ ໂດຍເນັ້ນແກ້ໄຂບັນຫາສະເພາະໜ້າ ເຊັ່ນ: ການປິດກິດຈະການຊົ່ວຄາວ, ການເລື່ອນແຜນການລົງທຶນອອກໄປ, ການເພີ່ມຈຳນວນແຮງງານໃນພາກຂົນສົ່ງ ແຕ່ຫຼຸດຈຳນວນແຮງງານໃນຂອດການຜະລິດລົງໄລຍະໜຶ່ງ, ຂະຫຍາຍສາງເກັບສິນຄ້າ, ກູ້ຢືມເງິນຕື່ມເພື່ອແກ້ໄຂບັນຫາຕົ້ນທຶນ ແລະ ສະພາບຄ່ອງ; ພ້ອມກັນນັ້ນ ກໍມີແຜນທີ່ຈະຫຼຸດຜ່ອນການນຳເຂົ້າເຄື່ອງຈັກຮັບໃຊ້ການຜະລິດລົງ (ຮູບສະແດງ 08).

**ຮູບສະແດງ 08:** ມາດຕະການຂອງໂຮງງານອຸດສາຫະກຳໃນການຮັບມືກັບຜົນກະທົບ.




ວິທີການແກ້ໄຂຜົນກະທົບຂອງພະຍາດໂຄວິດ 19 ຂອງໂຮງງານອຸດສາຫະກຳໃນເຂດ VITA ທີ່ໄດ້ປະຕິບັດຜ່ານມາສາມາດແບ່ງອອກໄດ້ເປັນ 3 ໄລຍະຄື:

**(ກ) ໄລຍະສັ້ນ (1-6 ເດືອນ):**

- ອອກກົດລະບຽບພາຍໃນຕາມມາດຕະການຂອງລັດຖະບານເພື່ອໃຫ້ພະນັກງານຊ່ວຍກັນປະຕິບັດຕາມຢ່າງເຂັ້ມງວດ ເຊັ່ນ: ງົດເວັ້ນການຊຸມແຊວ ແລະ ການສ້າງສັນເພື່ອຫຼີກເວັ້ນການແຜ່ລະບາດຂອງພະຍາດໂຄວິດ19.

- ເລັ່ງເຮັດການຜະລິດໃຫ້ໄດ້ຕາມເປົ້າໝາຍ ໂດຍການເພີ່ມຈຳນວນແຮງງານເຂົ້າໃນການຜະລິດ ເພື່ອຜະລິດໃຫ້ທັນກັບໃບສັ່ງຊື້ຂອງລູກຄ້າທີ່ຕິກຄ້າງໃນຊ່ວງກ່ອນການລະບາດ ແລະຈັດສົ່ງໃຫ້ທັນການ.

- ປັດຈຸບັນ ຜົນກະທົບໂດຍກົງທີ່ໄດ້ຮັບຈາກໂຄວິດ 19 ແມ່ນການພັດທະນາສິນຄ້າໃໝ່ ເນື່ອງຈາກການຂົນສົ່ງຕົວຢ່າງຂອງຜະລິດຕະພັນໃໝ່ຂອງບໍລິສັດໄປຫາປະເທດຜູ້ສັ່ງຊື້ທາງຍົນຫຼ້າຊ້າ. ການແກ້ໄຂບັນຫາສະເພາະໜ້າກໍ່ຄື ປຶກສາຫາລືກັບລູກຄ້າໃຫ້ຂັດຈ້ອນຂະບວນການຢືນຢັນຕົວຢ່າງ.

- ຈະບໍ່ມີການເພີ່ມເງິນລົງທຶນເຂົ້າໃນທຸລະກິດຕື່ມ ໂດຍສະເພາະແມ່ນງົບປະມານໃນການສັ່ງຊື້ເຄື່ອງຈັກໃໝ່ໆ ເພື່ອເພີ່ມກຳລັງການຜະລິດ ແລະ ຫຼຸດຕົ້ນທຶນ.

- ຟື້ນຟູລະບົບການຜະລິດຄືນໃໝ່ໃຫ້ກັບມາເປັນປົກກະຕິ ໂດຍການຈ້າງແຮງງານເພີ່ມເພື່ອສະໜອງການຜະລິດໃຫ້ທັນກັບການສັ່ງຊື້ຂອງລູກຄ້າ.

- ໃສ່ຜ້າອັດປາກ-ດັງ, ລ້າງມືໃສ່ສະບູ ແລະ ເຈວແອວກໍຮໍເຫຼົ້າ 90 ກ່ອນເຂົ້າໂຮງງານ, ແຫກອຸນຫະພູມພະນັກງານຕອນເຊົ້າ ແລະ ແລງ, ເຮັດວຽກເວັ້ນຫ່າງກັນ 1 ແມັດຂຶ້ນໄປ.

**(ຂ) ໄລຍະກາງ (6 ເດືອນ-1 ປີ):**

- ຕ້ອງເລັ່ງຜະລິດສະສົມສິນຄ້າໄວ້ ຖ້າເກີດໃນກໍລະນີສຸກເສີນບໍ່ໃຫ້ສິນຄ້າຂາດ ເມື່ອລູກຄ້າສັ່ງຊື້ສາມາດສົ່ງໄດ້ທັນທີ.

- ໃນໄລຍະກາງ, ພວກເຮົາມີແຜນທີ່ຈະເອົາຜູ້ຊ່ຽວຊານຈາກລູກຄ້າມາຊ່ວຍໂດຍກົງ ແລະ ປະຈຳຢູ່ໃນໂຮງງານ.

- ການຈັດຊື້ວັດຖຸດິບໃຫ້ມີໄວ້ສຳຮອງຫຼາຍກວ່າເກົ່າ.

- ເຝົ້າລະວັງການແຜ່ລະບາດເຊື້ອໄປເລື້ອຍໆ ເພື່ອພິຈາລະນາປິດ ຫຼື ເປີດດຳເນີນການຜະລິດຂອງໂຮງງານ.

- ຫາຊ່ອງທາງຕະຫຼາດໃໝ່ໆ ໃຫ້ຫຼາຍຂຶ້ນ.

**(ຄ) ໄລຍະຍາວ (1 ປີ ຂຶ້ນໄປ):**

- ເພີ່ມຄວາມໄວຂອງການຜະລິດໃຫ້ໄດ້ຕາມເປົ້າໝາຍ ແລະ ຜະລິດໃຫ້ມີສຳຮອງໄວ້ ເພື່ອພຽງພໍຕໍ່ການຂາຍໃນໄລຍະ 2-3 ເດືອນ.

- ຜະລິດສິນຄ້າສຳເລັດຮູບ ແລະ ສຳຮອງໄວ້ຫຼາຍຂຶ້ນ ເພື່ອຕອບສະໜອງໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງລູກຄ້າໄດ້ທັນເວລາ.

- ຖ້າແກ່ຍາວເຖິງ 1 ປີ ກໍຈຳເປັນຕ້ອງໄດ້ປົດຈຳນວນພະນັກງານລົງ ທັງນັ້ນແມ່ນຂຶ້ນກັບບໍລິມາດການຜະລິດຫຼຸດລົງ ຫຼື ເພີ່ມຂຶ້ນ. ນອກນີ້ ຖ້າຈຳເປັນກໍຕ້ອງໄດ້ມີການກູ້ຢືມທຶນຕື່ມ.

- ສ້າງທີ່ພັກໃຫ້ພະນັກງານຢູ່ພາຍໃນຮົ້ວຂອງໂຮງງານ ຕາມມາດຕະການສະກັດກັ້ນ ແລະ ເພື່ອໃຫ້ພະນັກງານເຮັດວຽກໄດ້ເປັນປົກກະຕິ.

### 2.2.1 ຂໍ້ສະເໜີຂອງໂຮງງານອຸດສາຫະກຳໃນເຂດ VITA ຕໍ່ລັດຖະບານ.

ຈາກການສຳພາດ ແລະ ເກັບກຳຂໍ້ມູນຂອງໂຮງງານອຸດສາຫະກຳທີ່ເຮັດການຜະລິດໃນນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ-ໂນນທອງ (VITA) ສາມາດສະຫຼຸບໄດ້ວ່າການລະບາດຂອງພະຍາດໂຄວິດ19 ໄດ້ສ້າງຜົນກະທົບໃຫ້ສະພາບການດຳເນີນທຸລະກິດໂດຍລວມຫຼາຍສົມຄວນ. ຈາກສະພາບການດັ່ງກ່າວ ເຖິງແມ່ນວ່າໃນໄລຍະຜ່ານມາ ລັດຖະບານຈະໄດ້ມີການເອົາໃຈໃສ່ອອກນະໂຍບາຍຫຼາຍມາດຕະການໃນການຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດທີ່ມີຕໍ່ທຸລະກິດ ແລະ ອຸດສາຫະກຳໂດຍລວມແລ້ວກໍ່ຕາມ ແຕ່ໃນທາງປະຕິບັດຜູ້ຕອບແບບສຳຫຼວດໃນເຂດນິຄົມໄດ້ມີການສະເໜີບາງມາດຕະການໃຫ້ລັດຖະບານຊ່ວຍໃນການຫຼຸດຜ່ອນຜົນການທົບໃຫ້ແກ່ການດຳເນີນທຸລະກິດຕື່ມ.

ຂໍ້ສະເໜີທີ່ໃຫ້ຄວາມສຳຄັນຫຼາຍກວ່າໝູ່ 50% ຂອງຜູ້ຕອບແບບສຳຫຼວດ ແມ່ນກ່ຽວກັບນະໂຍບາຍອຸດໜຸນດ້ານແຮງງານ ແລະ ສະຫວັດດີການສັງຄົມ ໂດຍສະເພາະແມ່ນການຊົດເຊີຍຄ່າແຮງງານທີ່ຕ້ອງການໃຫ້ລັດຖະບານຈ່າຍຊ່ວຍໃນໄລຍະທີ່ປິດໂຮງງານຊົ່ວຄາວ ເນື່ອງຈາກວ່າໃນໄລຍະດັ່ງກ່າວ ໂຮງງານບໍ່ໄດ້ດຳເນີນການຜະລິດ; ແລະ ຂໍ້ສະເໜີກ່ຽວກັບນະໂຍບາຍທາງດ້ານອາກອນຂອງນິຄົມ ທີ່ເນັ້ນໃຫ້ມີການຫຼຸດອາກອນລາຍໄດ້ແກ່ຜູ້ປະກອບການຫຼັງໄລຍະຜ່ອນຜັນພິເສດຂອງນິຄົມໃນການຈ່າຍອາກອນ ແລະ ການເລື່ອນໄລຍະເວລາຍົກເວັ້ນຄ່າອາກອນທີ່ເປັນນະໂຍບາຍສະເພາະໃນນິຄົມອອກໄປຕື່ມ. ຮອງລົງມາ 35% ແມ່ນສະເໜີໃຫ້ມີການຫຼຸດຄ່າໃຊ້ຈ່າຍສາທາລະນູປະໂພກ (ຄ່າໄຟຟ້າ, ຄ່າບຳບັດນ້ຳເສຍ ແລະ ຄ່າທຳນຽມຮັກສາສິ່ງແວດລ້ອມ), ສະເໜີຫຼຸດຄ່າໃຊ້ຈ່າຍທາງດ້ານເອກະສານ ແລະ ຂັ້ນຂອດໃນການສົ່ງສິນຄ້າອອກ, ສະເໜີໃຫ້ມີນະໂຍບາຍສະເພາະຊ່ວຍຄຸ້ມຄອງລາຄາສິນຄ້າທີ່ຈຳເປັນ ໂດຍສະເພາະແມ່ນລາຄາວັດຖຸດິບທີ່ຈຳເປັນໃນຂະບວນການຜະລິດທີ່ຕ້ອງນຳເຂົ້າຈາກຕ່າງປະເທດທີ່ມີຕົ້ນທຶນທີ່ເພີ່ມຂຶ້ນຈາກມາດຕະການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດ ເຊັ່ນ: ວັດຖຸດິບໃນການຜະລິດສິນຄ້າອີເລັກໂຕນິກ ແລະ ເຄື່ອງໃຊ້ໄຟຟ້າ; ແລະ ສຳລັບນະໂຍບາຍທາງດ້ານການເຜີຍແຜ່ຂໍ້ມູນຂ່າວສານທີ່ຈຳເປັນໃນການປະກອບທຸລະກິດ ແມ່ນສະເໜີໃຫ້ມີການເຜີຍແຜ່ຂໍ້ມູນທາງດ້ານທຸລະກິດຢ່າງເປັນປົກກະຕິ ແລະ ເພີ່ມຊ່ອງທາງໃໝ່ໆ ຂຶ້ນຕື່ມ ໂດຍສະເພາະແມ່ນຂໍ້ມູນຂອງຕະຫຼາດຜູ້ຊື້ໃໝ່ໆ. ນອກນີ້, ຍັງມີ 15% ທີ່ເຫັນວ່ານະໂຍບາຍການໃຫ້ສິນເຊື່ອແມ່ນມີຄວາມສຳຄັນເປັນອັນດັບສຸດທ້າຍ ໂດຍຂໍໃຫ້ເພີ່ມແຫຼ່ງໃນການກູ້ຢືມພາຍໃນປະເທດຂຶ້ນຕື່ມ ເຊິ່ງອາດເປັນຍ້ອນວ່າຜູ້ປະກອບການໃນເຂດນິຄົມ ສ່ວນໃຫຍ່ແມ່ນນັກລົງທຶນຈາກຕ່າງປະເທດ ສະນັ້ນ ເງິນລົງທຶນຈຶ່ງຂຶ້ນກັບນະໂຍບາຍ ແລະ ລະບຽບການຂອງຜູ້ສະໜອງທຶນໃນຕ່າງປະເທດເປັນສຳຄັນ ແຕ່ໃນອະນາຄົດກໍ່ມີຄວາມຕ້ອງການແຫຼ່ງສະໜອງເງິນກູ້ພາຍໃນປະເທດ (ຮູບສະແດງ 09).

**ຮູບສະແດງ 09:** ຂໍ້ສະເໜີຂອງໂຮງງານອຸດສາຫະກຳໃນເຂດ VITA ຕໍ່ລັດຖະບານ.




ພ້ອມນີ້, ຜູ້ໃຫ້ຂໍ້ມູນຍັງໄດ້ຊີ້ໃຫ້ເຫັນເຖິງຂໍ້ຫຍຸ້ງຍາກທີ່ໂຮງງານອຸດສາຫະກຳໃນເຂດນິຄົມປະສົບ ພາຍຫຼັງທີ່ໄດ້ມີການກັບມາເປີດດຳເນີນກິດຈະການຄືນ ຄື:

- ການສົ່ງອອກສິນຄ້າບໍ່ເປັນໄປຕາມແຜນການ ແລະ ການຂົນສົ່ງສິນຄ້າລະຫວ່າງປະເທດຍັງພົບຄວາມຫຍຸ້ງຍາກໃນການເຂົ້າ-ອອກ ໂດຍສະເພາະແມ່ນພະນັກງານຂັບລົດ.

- ການນຳເຂົ້າຊ່ຽວຊານຕ່າງປະເທດ ຍັງບໍ່ສາມາດເຂົ້າມາໄດ້ຕາມກຳນົດເວລາທີ່ບໍລິສັດຕ້ອງການເທື່ອ.

- ບໍລິສັດຍັງຂາດແຄນແຮງງານ ເພື່ອປະກອບໃນການເລັ່ງການຜະລິດຕາມແຜນການສັ່ງຊື້.

- ຂາດມາດຕະການລະອຽດກ່ຽວກັບຄ່າແຮງງານຂອງພະນັກງານໃນໄລຍະປິດກິດຈະການຊົ່ວຄາວໃນຊ່ວງຂອງການແຜ່ລະບາດຂອງພະຍາດ ພາກລັດຈະຊ່ວຍພາກທຸລະກິດແບບໃດ ເພາະໄລຍະດັ່ງກ່າວບໍ່ໄດ້ມີການສົ່ງອອກ ໂຮງງານບໍ່ມີລາຍໄດ້.

- ການເດີນທາງໄປມາໃນການຂົນສົ່ງພະນັກງານຍັງຊັກຊ້າ ແລະ ບໍ່ສະດວກປານໃດ ຍ້ອນແຕ່ລະບ້ານຍັງມີການກວດກາເອກະສານຕ່າງໆ ທີ່ກ່ຽວຂ້ອງຢູ່.

## III. ຂໍ້ສັງເກດ ແລະ ຂໍ້ສະເໜີແນະດ້ານວິຊາການ

ເຖິງແມ່ນວ່າ ຈະໄດ້ມີການຜ່ອນຜັນບາງມາດຕະການຂອງລັດຖະບານໃນໄລຍະຜ່ານມາ ແຕ່ອຸດສາຫະກຳເອງກໍ່ຕ້ອງມີການປັບຕົວພາຍໃຕ້ສະຖານະການທາງດ້ານເສດຖະກິດຮູບແບບໃໝ່ (New Business Model). ສະນັ້ນ, ຜູ້ຄົ້ນຄວ້າຈຶ່ງມີຂໍ້ສັງເກດ ແລະ ຂໍ້ສະເໜີແນະບາງມາດຕະການດັ່ງນີ້:

### (ກ) ຕໍ່ການປັບຕົວຂອງອຸດສາຫະກຳການຜະລິດ

- ໃນການທີ່ຈະສ້າງຄວາມເຊື່ອໝັ້ນໃຫ້ແກ່ລູກຄ້າໃນການສັ່ງຊື້ສິນຄ້ານັ້ນ ໂຮງງານຈະຕ້ອງມີການປັບປ່ຽນຮູບແບບການດຳເນີນກິດຈະກຳທາງດ້ານເສດຖະກິດໃໝ່ ໂດຍຕ້ອງເນັ້ນທີ່ຄວາມຕ້ອງການຂອງລູກຄ້າວ່າຢາກໄດ້ຫຍັງ ແລະ ຈະຕອບສະໜອງຄວາມຕ້ອງການຂອງລູກຄ້າແນວໃດ ໂດຍສັງເກດວ່າມີຫຍັງແດ່ທີ່ລູກຄ້າຈະສົນໃຈຫຼາຍທີ່ສຸດພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ 19. ທີ່ຜ່ານມາ ໄດ້ມີການສຶກສາຢືນຢັນມາແລ້ວວ່າຈະເປັນເລື່ອງຂອງຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈທາງສດຖະກິດ (Trust Economy) ເຊິ່ງຕ້ອງໄດ້ອາໃສຄວາມຊ່ວຍເຫຼືອຈາກພາກລັດເປັນພື້ນຖານຄຽງຄູ່ກັບການປັບຕົວຂອງອຸດສາຫະກຳ.

- ການພັດທະນາທາງດ້ານນະວັດຕະກຳ ແລະ ເຕັກໂນໂລຊີໃໝ່ໆ (Disruptive Technology) ເພື່ອມາສ້າງມູນຄ່າໃຫ້ກັບຕະຫຼາດ ແລະ ມູນຄ່າເພີ່ມໃຫ້ກັບຜະລິດຕະພັນແມ່ນເປັນສິ່ງຈຳເປັນເພື່ອສ້າງຄວາມແປກໃຫມ່ຂອງສິນຄ້າ ແລະ ກະຕຸ້ນໃຫ້ເກີດຄວາມຕ້ອງການໃໝ່ຂຶ້ນ. ໃນນັ້ນ ພາກລັດຕ້ອງໄດ້ມີສ່ວນຮ່ວມໃນການກຳນົດນະໂຍບາຍພາສີ-ອາກອນ ຕໍ່ການນຳເຂົ້າອຸປະກອນເພື່ອຮັບໃຊ້ການວິໄຈ ແລະ ພັດທະນາທີ່ເນັ້ນໃຊ້ເຕັກໂນໂລຊີ.

### (ຂ) ຂໍ້ສະເໜີແນະດ້ານນະໂຍບາຍຕໍ່ພາກລັດ

- ລັດຖະບານຄວນມີນະໂຍບາຍຊ່ວຍເຫຼືອອຸດສາຫະກຳການຜະລິດ ເປັນແບບສະເພາະເຈາະຈົງ (Personalize) ເນື່ອງຈາກວິກິດຂອງການແຜ່ລະບາດຄັ້ງນີ້ ມີຜູ້ໄດ້ຮັບຜົນກະທົບທີ່ແຕກຕ່າງກັນ; ດັ່ງນັ້ນ ນະໂຍບາຍທີ່ພາກລັດຈະເຂົ້າໄປຊ່ວຍເຫຼືອຈະເຮັດແບບດຽວກັນກັບອຸດສາຫະກຳການຜະລິດອື່ນໆ ນອກເຂດນິຄົມບໍ່ໄດ້ ແຕ່ຕ້ອງອອກແບບແຕ່ລະນະໂຍບາຍທີ່ແຕກຕ່າງກັນຕາມລຳດັບຜົນກະທົບ ແລະ ຈະຕ້ອງມີນະໂຍບາຍສະເພາະອຸດສາຫະກຳການຜະລິດໃນເຂດນິຄົມ ເຊັ່ນ: ສຳລັບໂຮງງານອຸດສາຫະກຳທີ່ຈຳເປັນຈະຕ້ອງກູ້ເງິນເພື່ອຮັກສາ

ສະພາບຄ່ອງຂອງທຸລະກິດຊ່ວງປິດກິດຈະການຊົ່ວຄາວຕາມມາດຕະການປ້ອງກັນພະຍາດຂອງລັດຖະບານ ພາກສ່ວນທີ່ກ່ຽວຂ້ອງຈະຕ້ອງຕິດຕາມຂໍ້ມູນຢ່າງໃກ້ຊິດ ເພື່ອໃຫ້ມີນະໂຍບາຍສະໜັບສະໜູນເງິນຕັ້ງຕົ້ນສໍາລັບທຸລະກິດຕໍ່ໄປ.

- ສະເໜີພາກສ່ວນທີ່ກ່ຽວຂ້ອງ ປຶກສາຫາລືໃນການແກ້ໄຂບັນຫາການນໍາໃຊ້ແຮງງານຕ່າງປະເທດໃຫ້ບໍລິສັດທີ່ມາລົງທຶນຢູ່ໃນເຂດນິຄົມ ໂດຍສະເພາະພາຍໃຕ້ສະພາບການແຜ່ລະບາດຂອງພະຍາດໂຄວິດ19 ນີ້; ເນື່ອງຈາກວ່າ ຍັງມີບາງບໍລິສັດທີ່ມີຄວາມຈໍາເປັນແທ້ໃນການນໍາໃຊ້ແຮງງານຕ່າງປະເທດ ໂດຍສະເພາະໃນຊ່ວງໄລຍະທີ່ມີການກໍ່ສ້າງ ເພາະໃນຄວາມເປັນຈິງແລ້ວໃນໄລຍະຜ່ານມາ ແຮງງານລາວຍັງບໍ່ສາມາດຕອບສະໜອງຕາມອັດຕາສ່ວນແຮງງານທີ່ໄດ້ມີການກໍານົດໄວ້ໃນລະບຽບແຮງງານເທື່ອ.

- ສະເໜີຫຼຸດອາກອນເງິນເດືອນພະນັກງານໃນຊ່ວງລະບາດຂອງພະຍາດໂຄວິດ 19 ແລະ ໃຫ້ອີງການປະກັນສັງຄົມຊ່ວຍພະນັກງານທີ່ໄດ້ຮັບຜົນກະທົບໃນຊ່ວງ ເດືອນ 4 ແລະ ເດືອນ 5; ແລະ ສະເໜີໃຫ້ກະຊວງແຮງງານອອກແຈ້ງການລະບຸຊັດເຈນວ່າລັດຖະບານຈະຊ່ວຍເຫຼືອພະນັກງານກິນເງິນເດືອນແນວໃດ.

- ລັດຖະບານຄວນອອກນະໂຍບາຍເພື່ອໃຫ້ເກີດການບໍລິໂພກສິນຄ້າ ແລະ ບໍລິການພາຍໃນປະເທດເພີ່ມຂຶ້ນ ໂດຍທີ່ຜູ້ປະກອບການຈະຕ້ອງມີການພັດທະນາສິນຄ້າ ແລະ ບໍລິການໄປພ້ອມໆ ກັນ ເຊິ່ງຈາກການແຜ່ລະບາດຂອງພະຍາດໂຄວິດ 19 ສະແດງໃຫ້ເຫັນວ່າ ຈະຕ້ອງມີການກະຈາຍຄວາມສ່ຽງເພາະການເຮັດທຸລະກິດທີ່ເຈາະຈົງແຕ່ຕະຫຼາດດຽວອາດບໍ່ພຽງພໍ. ແຕ່ເຖິງຢ່າງໃດກໍຕາມ ເນື່ອງຈາກອຸດສາຫະກໍາພາຍໃນນິຄົມແມ່ນຢູ່ພາຍໃຕ້ນະໂຍບາຍສະເພາະທີ່ຜະລິດເພື່ອສົ່ງເສີມການສົ່ງອອກ ແຕ່ການຫັນມາເບິ່ງຄວາມຕ້ອງການພາຍໃນປະເທດ ແລະ ສ້າງເງື່ອນໄຂໃຫ້ອຸດສາຫະກໍາສາມາດຜະລິດ ແລະ ແບ່ງຂາຍເພື່ອທົດແທນການນໍາເຂົ້າສໍາລັບບາງທຸລະກິດກໍ່ເປັນສິ່ງທີ່ເໝາະສົມໃນການໄດ້ສຶກສາຄວາມເປັນໄປໄດ້ຕໍ່ບັນຫາດັ່ງກ່າວ ໂດຍສະເພາະແມ່ນການສົ່ງເສີມໃຫ້ມີການຜະລິດເຄື່ອງມືທາງການແພດເພື່ອຮັບມືກັບສະຖານະການການແຜ່ລະບາດຂອງພະຍາດໃນອະນາຄົດ.

- ຜູ້ລົງທຶນສ່ວນໜຶ່ງ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງຕໍ່ບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ 19 ໂດຍສະເພາະແມ່ນປະກອບເອກະສານນໍາເຂົ້າ ແລະ ສົ່ງອອກສິນຄ້າ, ການສ້າງແຜນນໍາເຂົ້າປະຈໍາປີ, ການປະສານງານກັບໜ່ວຍງານພາກລັດທີ່ກ່ຽວຂ້ອງ ແລະ ການນໍາໃຊ້ແຮງງານຕ່າງປະເທດ. ສະນັ້ນ ສະໜີໃຫ້ພາກສ່ວນທີ່ກ່ຽວຂ້ອງແຕ່ລະຂັ້ນສືບຕໍ່ສ້າງຄວາມກະຈ່າງແຈ້ງໃຫ້ຜູ້ປະກອບການຕື່ມ.

- ໃນປັດຈຸບັນ ລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສໍາຄັນໃນການສົ່ງເສີມການຜະລິດສິນຄ້າເພື່ອສະໜອງຄວາມຕ້ອງການຂອງຜູ້ບໍລິໂພກພາຍໃນປະເທດ ໂດຍສະເພາະແມ່ນອຸດສາຫະກໍາປຸງແຕ່ງຕາມທິດສີຂຽວ; ສະນັ້ນ ສະເໜີໃຫ້ມີການສຶກສາລະອຽດເຖິງການເຊື່ອມໂຍງກັນຂອງອຸດສາຫະກໍາພາຍໃນ ແລະ ພາຍນອກເຂດນິຄົມ ເພື່ອຊອກຫາຊ່ອງທາງການຂະຫຍາຍການຜະລິດໄປສູ່ລະດັບທ້ອງຖິ່ນ ແລະ ຊຸມຊົນຫຼາຍຂຶ້ນ.

### ເອກະສານອ້າງອີງ

1. ຄໍາແນະນໍາ ກ່ຽວກັບການປັບປ່ຽນເງື່ອນໄຂ ແລະ ມາດຕະການສໍາລັບການເຄື່ອນໄຫວຂອງພາກທຸລະກິດໃນໄລຍະທີ່ມີການລະບາດພະຍາດໂຄວິດ 19 ຕາມທີ່ໄດ້ກໍານົດໃນຄໍາແນະນໍາ 031/ສພກ, ລົງວັນທີ 21 ເມສາ 2020 ແລະ ປ່ຽນແທນສະບັບເລກທີ 071/ສພກ, ລົງວັນທີ 11 ພຶດສະພາ 2020.
2. ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈໍາປີ 2019 ແລະ ທິດທາງແຜນການປະຈໍາປີ 2020. ສະພາບໍລິຫານເສດຖະກິດນິຄົມອຸດສາຫະກໍາການຄ້າ ວຽງຈັນ - ໂນນທອງ ສະບັບເລກທີ 0049/ນອຄວ, ລົງວັນທີ 09 ມັງກອນ 2020.
3. ບົດລາຍງານກ່ຽວກັບບັນດາໂຮງງານ/ບໍລິສັດ ທີ່ເປີດດໍາເນີນກິດຈະການຊ່ວງໄລຍະການເກີດພະຍາດໂຄວິດ 19 (COVID 19). ສະພາບໍລິຫານເສດຖະກິດນິຄົມອຸດສາຫະກໍາການຄ້າ ວຽງຈັນ - ໂນນທອງ ສະບັບເລກທີ 1213/ນອຄວ, ລົງວັນທີ 29 ພຶດສະພາ 2020.